ສາທາລະນາລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕເອກະພາບ ວັດທະນະຖາວອນ

========== 000 ==========

ກະຊວງກະສິກຳ ແລະ ປ່າໄມ້

ກອງທຶນຫຼຸດຜ່ອນຄວາມທຸກຍາກ (ທລຍ)

ເລກທີ 0448/ທລຍ

ນະຄອນຫຼວງວຽງຈັນ, ວັນທີ 9 ມີນາ 2020

# ໜັງສືເຊີນເຂົ້າຮ່ວມປະມູນສົມທຽບລາຄາ

ສຳລັບການຈັດພິມປຶ້ມຄູ່ມື ແລະ ແຜ່ນໂພດສະເຕີ ພາຍໃຕ້ວຽກງານຂະແໜງວິສະວະກຳ

ສັນຍາເລກທີ: PRF.III-AF/IEC-02/G-S/2020 (SDC-TA Printing)

ເຖິງ: ______________________________

1. ກອງທຶນຫລຸດຜ່ອນຄວາມທຸກຍາກ ໄດ້ຮັບທຶນກູ້ຢືມ ຈາກສະມາຄົມພັດທະນາສາກົນ (IDA), ທະນາຄານໂລກ ສົມທົບກັບກອງທຶນສຳຮອງຈາກບັນດາຜູ້ໃຫ້ທຶນຕ່າງໆ (ຜູ້ໃຫ້ທຶນ) ເພື່ອດຳເນີນການປະມູນຈັດພິມປຶ້ມຄູ່ມື ແລະ ແຜ່ນໂພດສະເຕີ ພາຍໃຕ້ວຽກງານຂະແໜງວິສະວະກຳ, ດ້ວຍການສະເໜີໃຫ້ຍື່ນຊອງປະມູນເພື່ອສົມທຽບລາຄາ.
2. ກອງທຶນຫລຸດຜ່ອນຄວາມທຸກຍາກ ຂໍເຊີນໂຮງພິມຂອງທ່ານ ເຂົ້າຍື່ນຊອງສົມທຽບລາຄາ ສຳລັບການຈັດພິມດັ່ງກ່າວຂ້າງເທິງ, ໄລຍະເວລາໃນການສົ່ງມອບແມ່ນ 45 ວັນ. ຕາຕະລາງລະອຽດຂອງສິ່ງພິມມີດັ່ງລຸ່ມນີ້:

| ລ/ດ | ລາຍການພິມ | ຫົວໜ່ວຍ | ຈຳນວນ | | ກຳນົດເວລາສົ່ງ | ສະຖານຈັດສົ່ງ |
|---|---|---|---|---|---|---|
| | | | ໜ້າ | ຫົວ | | |
| I. | ປຶ້ມຄູ່ມື | | | | | |
| 1 | ກຸ່ມບູລະນະຮັກສາທາງ (RMG) ສຳລັບ ຊຸມຊົນ | ຫົວ | 36 | 200 | 45 ວັນ | ຫ້ອງການ ທລຍ ນະຄອນຫລວງ ວຽງຈັນ |
| 2 | ກຸ່ມບູລະນະຮັກສາທາງ (RMG) ສຳລັບ ວິຊາການ | ຫົວ | 36 | 100 | | |
| 3 | ຊຸມຊົນເປັນເຈົ້າການໃນການກໍ່ສ້າງ (CFA) ພາສາລາວ | ຫົວ | 47 | 400 | | |
| 4 | ຊຸມຊົນເປັນເຈົ້າການໃນການກໍ່ສ້າງ (CFA) ພາສາອັງກິດ | ຫົວ | 55 | 20 | | |
| 5 | ແນະການປະເມີນຜົນສິ່ງແວດລ້ອມ ສຳລັບ ຊຸມຊົນ | ຫົວ | 32 | 350 | | |
| 6 | ການຄຸ້ມຄອງຄວາມສ່ຽງຈາກໄພພິບັດ ລາວ | ຫົວ | 71 | 50 | | |
| 7 | ການຄຸ້ມຄອງຄວາມສ່ຽງຈາກໄພພິບັດ ອັງກິດ | ຫົວ | 72 | 10 | | |
| 8 | ແນະນຳການປະເມີນຄວາມສ່ຽງໄພພິບັດສຳລັບ ຊຸມຊົນ | ຫົວ | 21 | 400 | | |
| 9 | ແນະນຳການຈັດຕັ້ງປະຕິບັດລາຍງານເຫດສຸກເສີນ ສຳລັບ ທລຍເມືອງ | ຫົວ | 20 | 100 | | |
| 10 | ແນະນຳການຈັດຕັ້ງປະຕິບັດລາຍງານເຫດສຸກເສີນ ສຳລັບ ທລຍ ສູນກາງ | ຫົວ | 20 | 10 | | |
| 11 | ປຶ້ມຮູບພາບ ສົມທຽບຄຸນນະພາບ ວັດສະດຸ ສິ່ງກໍ່ສ້າງ ດີ ແລະ ບໍ່ດີ | ຫົວ | 38 | 350 | | |

| | | | | | | |
|---|---|---|---|---|---|---|
| 12 | ປື້ມບັນທຶກພາກສະໜາມ | ຫົວ | 63 | 350 | 45 ວັນ | ຫ້ອງການ ທລຍ ນະຄອນຫລວງວຽງຈັນ |
| 13 | ຄຸ້ມຄອງ ແລະ ນຳໃຊ້ ວຽກຂົວ, ທາງ ແລະ ທໍ່ | ຫົວ | 26 | 350 | | |
| 14 | ຄຸ້ມຄອງ ແລະ ນຳໃຊ້ ວຽກນ້ຳລິນ | ຫົວ | 23 | 350 | | |
| 15 | ຄຸ້ມຄອງ ແລະ ນຳໃຊ້ ວຽກນ້ຳຂາດານ | ຫົວ | 42 | 350 | | |
| 16 | ຄຸ້ມຄອງ ແລະ ນຳໃຊ້ ວຽກຊົນລະປະທານ | ຫົວ | 67 | 350 | | |
| 17 | ຄຸ້ມຄອງ ແລະ ນຳໃຊ້ ອາຄານ | ຫົວ | 29 | 350 | | |
| II. | ແຜ່ນໂພດສະເຕີ | | | | | |
| 1 | ກຸ່ມບູລະນະຮັກສາທາງ ສຳລັບຊຸມຊົນ - ສັນຍາການສ້ອມແປງ | ແຜ່ນ | 1 | 10 | 45 ວັນ | ຫ້ອງການ ທລຍ ນະຄອນຫລວງວຽງຈັນ |
| 2 | ກຸ່ມບູລະນະຮັກສາທາງ ສຳລັບຊຸມຊົນ - ຄວາມເສຍຫາຍທີ່ເກີດຂື້ນ | ແຜ່ນ | 1 | 10 | | |
| 3 | ກຸ່ມບູລະນະຮັກສາທາງ ສຳລັບຊຸມຊົນ - ມາດຕະຖານກວດກາ | ແຜ່ນ | 1 | 10 | | |
| 4 | ກຸ່ມບູລະນະຮັກສາທາງ ສຳລັບຊຸມຊົນ - ໜ້າວຽກສ້ອມແປງ | ແຜ່ນ | 1 | 10 | | |
| 5 | ຊຸມຊົນເປັນເຈົ້າໃນການກໍ່ສ້າງ - ຄວາມສາມາດເຮັດໄດ້ຂອງຄົນ | ແຜ່ນ | 1 | 45 | | |
| 6 | ຊຸມຊົນເປັນເຈົ້າໃນການກໍ່ສ້າງ - ສາເຫດຜົນກະທົບສິ່ງແວດລ້ອມ | ແຜ່ນ | 1 | 45 | | |
| 7 | ການປ້ອງກັນສິ່ງແວດລ້ອມ ແລະ ສັງຄົມ - ນະໂຍບາຍຕ່າງໆ | ແຜ່ນ | 1 | 45 | | |
| 8 | ສາຍເຫດຜົນກະທົບສິ່ງແວດລ້ອມ | ແຜ່ນ | 1 | 45 | | |
| 9 | ການຄຸ້ມຄອງຄວາມສ່ຽງຈາກໄພພິບັດ - ປະເພດໄພອັນຕະລາຍ | ແຜ່ນ | 1 | 45 | | |
| 10 | ສົມທຽບຄຸນນະພາບດີ ແລະ ບໍ່ດີ | ແຜ່ນ | 1 | 45 | | |
| 11 | ຊຸມຊົນເປັນເຈົ້າການໃນການກໍ່ສ້າງ - ການເງິນ ແລະ ການຄ່ຽງເງິນ | ແຜ່ນ | 1 | 45 | | |

3. ການປະມູນນີ້ ຈະດຳເນີນຕາມຂັ້ນຕອນການປະມູນສົມທຽບລາຄາ ທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄຳແນະນຳ ກ່ຽວກັບການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ, ສະບັບເລກທີ 0047/ກງ, ລົງວັນທີ 13 ກຸມພາ 2019.

4. ຊອງສະເໜີລາຄາ ຈະຕ້ອງສົ່ງກ່ອນເວລາ 15:00 ໂມງ ຂອງວັນທີ 27/03/2020 ຢູ່ທີ່ຫ້ອງການກອງທຶນຫລຸດຜ່ອນຄວາມທຸກຍາກ, ແລະ ຊອງປະມູນທຸກໆຊອງ ຈະໄດ້ເປີດໃນເວລາ 15:00 ໂມງ, ຂອງວັນທີ 27/03/2020 ຢູ່ທີ່ຫ້ອງການ ທລຍ ຕັ້ງຢູ່ໃນຂົງເຂດສຳນັກງານນາຍົກລັດຖະມົນຕີ, ຖະໜົນສີສະຫວາດ, ບ້ານນາໄຮ່ດ່ຽວເມືອງຈັນທະບູລີ, ນະຄອນຫລວງວຽງຈັນ, ສປປ ລາວ.

5. ທ່ານສາມາດສອບຖາມຂໍ້ມູນເພີ່ມເຕີມ ໄດ້ທີ່ຫ້ອງການ ທລຍ, ຕັ້ງຢູ່ໃນຂົງເຂດສຳນັກງານນາຍົກລັດຖະມົນຕີ, ຖະໜົນສີສະຫວາດ, ບ້ານນາໄຮ່ດ່ຽວ, ເມືອງຈັນທະບູລີ, ນະຄອນຫລວງວຽງຈັນ, ຕາມວັນ ແລະ ເວລາເຮັດວຽກ ໂທ: 261479-80 (ຕໍ່ 105).

ກອງທຶນຫລຸດຜ່ອນຄວາມທຸກຍາກ,
ຜູ້ອຳນວຍການບໍລິຫານ ທລຍ

ຈິດ ທະວີໃສ